Australian Government

COVID-19 VACCINATION

# ຫຼັງຈາກທີ່ທ່ານສັກຢາຕ້ານ COVID-19 Spikevax (Moderna)

ອັບເດດຄັ້ງລ່າສຸດ: 2 ກັນຍາ 2021

## ກ່ຽວກັບຢາວັກຊີນຊະນິດນີ້

ມື້ນີ້ ທ່ານກໍໄດ້ຮັບການສັກ **ຢາວັກຊີນສະໄປ້ຄ໌ແວກສ໌ (ມໍເດີນນາ) [Spikevax (Moderna)]** ແລ້ວ.

ຢາວັກຊີນຊະນິດນີ້ສາມາດປ້ອງກັນບໍ່ໃຫ້ຄົນເຈັບປ່ວຍຈາກພະຍາດ COVID-19. ຢາວັກຊີນ Moderna COVID-19 ບໍ່ມີສ່ວນປະກອບຂອງເຊື້ອໄວຣັສທີ່ມີຊີວິດແຕ່ຢ່າງໃດ, ແລະມັນກໍບໍ່ສາມາດເອົາເຊື້ອ COVID-19 ໃຫ້ທ່ານໄດ້. ຢານີ້ປະກອບດ້ວຍລະຫັດພັນທຸກໍາສໍາລັບພາກສ່ວນອັນສໍາຄັນຂອງເຊື້ອໄວຣັສ SARS-CoV-2 ທີ່ເອີ້ນວ່າ ໂປຣຕີນທີ່ແຫຼມຄົມ. ຫຼັງຈາກໄດ້ຮັບການສັກວັກຊີນແລ້ວ, ຮ່າງກາຍຂອງທ່ານກໍຈະເຮັດກອບປີ້ເອົາໂປຣຕີນທີ່ແຫຼມຄົມນີ້ຂຶ້ນມາ. ຫຼັງຈາກນັ້ນ ລະບົບຄຸ້ມກັນຂອງທ່ານກໍຈະຮຽນຮູ້ເພື່ອໃຫ້ຮູ້ຈັກແລະຕໍ່ສູ້ກັບເຊື້ອໄວຣັສ SARS-CoV-2 ນີ້. ລະຫັດພັນທຸກໍາຈະແຍກສະຫຼາຍຕົວໂດຍໄວໂດຍຮ່າງກາຍ.

## ສິ່ງທີ່ຄາດວ່າຈະເກີດຂຶ້ນຫຼັງຈາກສັກຢາ

ເຊັ່ນດຽວກັບຢາວັກຊີນຊະນິດອື່ນໆ, ທ່ານອາດຈະຮູ້ສຶກວ່າມີອາການຂ້າງຄຽງບາງຢ່າງຫຼັງຈາກໄດ້ຮັບການສັກຢາວັກຊີນຕ້ານ COVID-19.

ອາການຂ້າງຄຽງທີ່ **ມັກເກີດຂຶ້ນທົ່ວໄປ** ຫຼັງຈາກສັກຢາ **Moderna** ລວມມີ:

- ປວດຢູ່ບ່ອນຮອຍສັກຢາ
- ຮູ້ສຶກເມື່ອຍ
- ເຈັບຫົວ
- ປວດຕາມກ້າມຊີ້ນ
- ເປັນໄຂ້ແລະໜາວສັ່ນ
- ປວດຕາມຂໍ້.

**ອາການຂ້າງຄຽງທີ່ ບໍ່ຄ່ອຍເປັນ** ຫຼັງຈາກສັກຢາ **Moderna** ລວມມີ:

- ເປັນຮອຍແດງຫຼືໃຄ່ຢູ່ບ່ອນຮອຍສັກຢາ
- ໃຄ່ຫຼືເຈັບຢູ່ກ້ອງຂີ້ແຮ້
- ປວດຮາກ/ຮາກ
- ຕ່ອມນໍ້າເຫຼືອງໃຫຍ່ຂຶ້ນ.

ອາການຂ້າງຄຽງເຫຼົ່ານີ້ປົກກະຕິຈະເປັນພຽງເບົາບາງແລະປົກກະຕິກໍຈະຫາຍໄປເອງພາຍໃນສອງຫຼືສາມມື້. ບາງຄົນອາດຮູ້ສຶກຄ້າຍກັບວ່າມີອາການຂອງໄຂ້ຫວັດໃຫຍ່ແຮງ ຈາກຢາວັກຊີນຊະນິດນີ້ເມື່ອທຽບກັບຢາວັກຊີນອື່ນໆທົ່ວໄປ ແລະອາດຕ້ອງໄດ້ພັກຈາກກິດຈະກໍາທີ່ເຮັດຕາມປົກກະຕິ. ອາການເຫຼົ່ານີ້ອາດເກີດຂຶ້ນໄດ້ຫຼັງຈາກສັກຢາໂດສທໍາອິດຫຼືໂດສທີສອງ ແຕ່ວ່າ ສ່ວນມາກມັກຈະເກີດຂຶ້ນຫຼັງຈາກໂດສທີສອງ.

ຖ້າທ່ານຮູ້ສຶກປວດຢູ່ບ່ອນຮອຍສັກຢາ ຫຼື ເປັນໄຂ້, ເຈັບຫົວ ຫຼື ປວດຕາມຮ່າງກາຍ ຫຼັງຈາກສັກຢາແລ້ວ, ທ່ານສາມາດກິນຢາ paracetamol ຫຼື ibuprofen. ຢານີ້ຈະຊ່ວຍບັນເທົາອາການຂ້າງເທິງບາງຢ່າງ. ທ່ານບໍ່ຈໍາເປັນຕ້ອງກິນຢາ paracetamol ຫຼື ibuprofen ກ່ອນໄປສັກຢາວັກຊີນ. ຖ້າມີການໃຄ່ຢູ່ບ່ອນຮອຍສັກຢາ, ທ່ານສາມາດໃຊ້ຜ້າເຢັນຂົມໄວ້.

ອາການຂ້າງຄຽງທີ່**ເກີດຂຶ້ນຍາກທີ່ສຸດ** ທີ່ໄດ້ຖືກລາຍງານ ຫຼັງຈາກສັກຢາ **Moderna** ແມ່ນ:

- ມີປະຕິກິລິຍາພູມແພ້ຢ່າງແຮງ (anaphylaxis).
- Myocarditis (ການອັກເສບຂອງກ້າມຊີ້ນຫົວໃຈ) ແລະ pericarditis (ການອັກເສບຂອງຖົງຫຸ້ມຫົວໃຈ). ກໍລະນີທີ່ຖືກລາຍງານແມ່ນເປັນພຽງເບົາບາງແລະຫາຍໄປເອງໂດຍໄວ, ເຖິງແມ່ນວ່າຈະຕ້ອງໄດ້ສືບຕໍ່ຕິດຕາມເບິ່ງກໍລະນີດັ່ງກ່າວ. ກໍລະນີທີ່ກ່າວມາມັກເກີດຂຶ້ນຫຼັງຈາກສັກຢາໂດສທີສອງແລະມັກເກີດຂຶ້ນກັບຊາຍໜຸ່ມ (ອາຍຸ < 30 ປີ).

ທ່ານຕ້ອງໄປໃຫ້ແພດເບິ່ງອາການຫຼັງຈາກສັກວັກຊີນ ຖ້າວ່າ:

- ທ່ານຄິດວ່າທ່ານກໍາລັງມີປະຕິກິລິຍາພູມແພ້. ໃຫ້ໂທຫາ 000 ຖ້າທ່ານຮູ້ສຶກວ່າມີອາການທີ່ຮ້າຍແຮງ, ເຊັ່ນຫາຍໃຈຝືດ, ຫາຍໃຈດັງວີດໆ, ຫົວໃຈເຕັ້ນໄວ ຫຼື ໜ້າມືດ
- ທ່ານຮູ້ສຶກເຈັບ, ແໜ້ນ ຫຼື ບໍ່ສະບາຍ ທີ່ໜ້າເອິກ, ບາດເຕັ້ນຂອງຫົວໃຈບໍ່ສະໝໍ່າສະເໝີ, ຫົວໃຈເຕັ້ນໄວ ຫຼື 'ບາດຢຸດບາດເຕັ້ນ', ເປັນລົມ, ຫາຍໃຈຝືດ ຫຼື ຮູ້ສຶກເຈັບເວລາຫາຍໃຈ
- ທ່ານກັງວົນກ່ຽວກັບອາການຂ້າງຄຽງໃດໜຶ່ງທີ່ອາດເກີດຂຶ້ນ ຫຼື ມີອາການໃໝ່ ຫຼື ອາການທີ່ບໍ່ຄາດມາກ່ອນ
- ທ່ານມີອາການຂ້າງຄຽງຈາກຢາວັກຊີນທີ່ຄາດວ່າຈະເກີດຂຶ້ນ, ແຕ່ວ່າອາການນັ້ນບໍ່ຫາຍໄປຫຼັງຈາກສອງສາມມື້ແລ້ວ.

ສໍາລັບອາການທີ່ບໍ່ຮີບດ່ວນ, ທ່ານສາມາດໄປພົບຜູ້ດູແລສຸຂະພາບຂອງທ່ານທີ່ເຄີຍໄປຫາເປັນປະຈໍາ (ປົກກະຕິຈະແມ່ນ GP ຂອງທ່ານ).

## ການຕິດຕາມເບິ່ງຄວາມປອດໄພຂອງຢາວັກຊີນແລະການລາຍງານອາການຂ້າງຄຽງ

ທ່ານສາມາດລາຍງານອາການຂ້າງຄຽງທີ່ສົງໃສ ກັບຜູ້ສັກຢາໃຫ້ທ່ານຫຼືແພດດູແລສຸຂະພາບຄົນອື່ນໆ. ເຂົາເຈົ້າຈະເຮັດລາຍງານຢ່າງເປັນທາງການຕາງໜ້າທ່ານຫາກະຊວງສາທາລະນະສຸກຢູ່ໃນລັດຫຼືເຂດປົກຄອງຂອງທ່ານ ຫຼື ລາຍງານໂດຍຕົງຫາຄະນະກໍາມະການຄຸ້ມຄອງສິນຄ້າທີ່ໃຊ້ໃນການປິ່ນປົວ (TGA).

ຖ້າທ່ານປະສົງຢາກເຮັດລາຍງານດ້ວຍຕົນເອງ, ກະລຸນາເຂົ້າໄປທີ່ ເວັບເພຊ ສໍາລັບລາຍງານອາການຂ້າງຄຽງທີ່ສົງໃສເຊິ່ງກ່ຽວຂ້ອງກັບການສັກວັກຊີນຕ້ານ COVID-19 ຫຼື ໄປທີ່ເວັບໄຊ້ຂອງ TGA ແລະເຮັດຕາມຄໍາແນະນໍາໃນໜ້ານັ້ນ.

## ການກວດຫາເຊື້ອ COVID-19 ຫຼັງຈາກສັກຢາວັກຊີນແລ້ວ

ບາງອາການຂ້າງຄຽງຈາກການສັກວັກຊີນຕ້ານ COVID-19 ອາດຄ້າຍຄືກັນກັບອາການຂອງ COVID-19 ເອງ (ເຊັ່ນ ເປັນໄຂ້). ຢ່າງໃດກໍດີ, Moderna ບໍ່ມີສ່ວນປະກອບຂອງເຊື້ອໄວຣັສທີ່ມີຊີວິດໃດໆ ແລະ ບໍ່ສາມາດກໍ່ໃຫ້ເກີດເປັນພະຍາດ COVID-19. ທ່ານອາດຈະບໍ່ຈຳເປັນຕ້ອງໄປເຮັດການກວດຫາເຊື້ອCOVID-19 ຫຼືແຍກປ່ຽວ:

- ຖ້າວ່າທ່ານເກີດມີອາການທົ່ວໆໄປເຊັ່ນເປັນໄຂ້, ເຈັບຫົວ ຫຼື ຮູ້ສຶກເມື່ອຍພາຍໃນສອງມື້ທຳອິດຫຼັງຈາກສັກຢາ, ແລະ
- ຖ້າວ່າທ່ານໝັ້ນໃຈວ່າທ່ານບໍ່ມີອາການຂອງທາງເດີນຫາຍໃຈໃດໆ (ເຊັ່ນ ນ້ຳມູກໄຫຼ, ໄອ, ເຈັບຄໍ, ບໍ່ຮູ້ກິ່ນ ແລະລົດຊາດອາຫານ).

ຢ່າງໃດກໍດີ, ທ່ານຄວນກວດເບິ່ງຂໍ້ແນະນຳອັນປັດຈຸບັນຢູ່ໃນລັດ/ເຂດປົກຄອງຂອງທ່ານ ສຳລັບຂໍ້ມູນທີ່ໄດ້ຖືກອັບເດດລ່າສຸດ. ຄຳແນະນຳນີ້ອາດປ່ຽນແປງໄປ ໃນກໍລະນີທີ່ເກີດມີການແຜ່ລະບາດຂອງ COVID-19 ຢູ່ໃນເຂດທ້ອງຖິ່ນຂອງທ່ານ. ທ່ານອາດຈະຍັງຕ້ອງໄປເຮັດການກວດຫາເຊື້ອ COVID-19 ຖ້າວ່າທ່ານຕົກເຂົ້າເງື່ອນໄຂຢ່າງອື່ນ, ຕົວຢ່າງ ຖ້າວ່າທ່ານເປັນຜູ້ສຳຜັດໃກ້ຊິດກັບຜູ້ທີ່ຕິດເຊື້ອ COVID-19. ຖ້າສົງໄສ, ໃຫ້ໄປຫາແພດເພື່ອກວດເບິ່ງອາການ.

## ໃຫ້ຈື່ການນັດໝາຍຄັ້ງທີສອງຂອງທ່ານ

ມັນເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ຮັບຢາ Moderna ສອງໂດສ. ຢາສອງໂດສນີ້ໂດຍທົ່ວໄປຈະສັກໃຫ້ໂດຍຫ່າງກັນ 4-6 ອາທິດ, ແຕ່ວ່າອາດຈະແນະນຳໃຫ້ສັກຫ່າງກັນດົນກວ່ານັ້ນໃນກໍລະນີພິເສດ. ການໄດ້ສັກຢາໂດສທີສອງມີແນວໂນ້ມວ່າຈະໃຫ້ການປົກປ້ອງທ່ານ ຈາກ COVID-19 ເປັນລະຍະເວລາໄດ້ດົນຂຶ້ນ.

## ຂໍ້ມູນທີ່ທ່ານໄດ້ສະໜອງໃຫ້ທີ່ບ່ອນນັດສັກຢາຈະຖືກນຳໃຊ້ຢ່າງໃດ

ສຳລັບຂໍ້ມູນທີ່ວ່າລາຍລະອຽດສ່ວນຕົວຂອງທ່ານຈະຖືກເກັບກຳ, ຮັກສາໄວ້ແລະນຳໃຊ້ຢ່າງໃດນັ້ນ ຂໍໃຫ້ເຂົ້າໄປເບິ່ງ https://www.health.gov.au/using-our-websites/privacy/privacy-notice-for-covid-19-vaccinations